

ຢ. ມາຂີນາ, ກຣ. ຄາຍ

# ເດັກນ້ອຍຈາກ ເມືອງ ຊິມບຽກ

ຢ. ມາຊີນາ, ກຣ. ຄາຍ

# ເດັກນ້ອຍຈາກ ເມືອງຊີມບຽກ

ແຕ້ມຮູບໂດຍ: ວ. ອາໂບຊິນ

ບຸນສົ່ງ ແກ້ວບົວສາຍ
ສ. ສາຍບຸນມີ

01 JAN 2009

ສຳນັກພິມ "ຣາດູກາ"
ມົດສະກູ

ແປໂດຍ: ສິນະຄອນ ປະທຸມມະລັດ

ເພື່ອນຜູ້ຫນຸ່ມນ້ອຍ, ຈົ່ງເປີດປື້ມເຫລັ້ມນີ້, ແລ້ວຕັ້ງໃຈອ່ານໃຫ້ດີ. ມັນໄດ້ເວົ້າເຖິງບຸກຄົນຜູ້ມີຊື່ວ່າ ວະລາດີເມຍ ອີລິດ ເລນິນ ຊຶ່ງເປັນທີ່ຮູ້ຈັກກັນດີທົ່ວໂລກ.

ປື້ມຫົວນີ້ຈະເວົ້າເຖິງ ວະລາດີເມຍ ອີລິດ ເມື່ອຄາວຍັງເປັນເດັກນ້ອຍ, ຕະຫລອດຮອດພໍ່ແມ່, ບ້ານເກີດເມືອງນອນ, ຕົວເມືອງທີ່ເພິ່ນໄດ້ຢູ່ແຕ່ຄາວຍັງນ້ອຍ ແລະ ຈົນເຕີບໂຕຂຶ້ນເປັນບ່າວ. ເຈົ້າຄົງຢາກຈະຖາມວ່າເພິ່ນຮູ້ເລື່ອງທັງຫມົດເຫລົ່ານີ້ໄດ້ແນວໃດ? ເຮົາຈະຂໍຕອບເຈົ້າດ້ວຍຄວາມເຕັມໃຈ.

ບຸນສົ່ງ ແກ້ວບົວສາຍ
ສ. ສາຍບຸນມີ

© ແປເປັນພາສາລາວແລະແຕ້ມຮູບປະກອບໂດຍສຳນັກພິມ "ຣາດູກາ", 1985

ISBN 5-05-000211-7

ຫມົດທຸກຄົນໄດ້ຮູ້ດີແລ້ວວ່າ ມົດສະກູ ແມ່ນນະຄອນຫລວງຂອງສະຫະພາບໂຊວຽດ. ທີ່ສະຫນາມ ໂຊວຽດສະກາຍາ ມີເຮືອນໃຫຍ່ສີແດງຫລັງຫນຶ່ງ ຊຶ່ງເອີ້ນວ່າ ສະພາໂຊວຽດປະຈຳມົດສະກູ. ຢູ່ຂ້າງສະຫນາມອີກດ້ານຫນຶ່ງ, ເບື້ອງຫລັງສວນ ດອກກີເຍີນ, ມີເຮືອນສູງຫລັງຫນຶ່ງ ທາສີຂາວ ຊຶ່ງເປັນບ່ອນເກັບຮັກສາເອກກະສານສຳຄັນຂອງສູນກາງພັກ. ຢູ່ທີ່ນັ້ນ ມີຫ້ອງກ້ວາງຂວາງທີ່ສຸດ ຫ້ອງຫນຶ່ງ, ເລິກລົງໄປໃນໃຕ້ດິນ. ແລະຢູ່ທີ່ນັ້ນມີເອກກະສານທີ່ມີຄຸນຄ່າ, ເອກກະສານທີ່ຂຽນດ້ວຍມື ແລະ ຈົດຫມາຍຂອງ ວະລາດີເມຍ ອີລິດເລນິນ ທີ່ໄດ້ບັນຈຸໄວ້ໃນຫີບນິລະໄພ. ຢູ່ໃນເຮືອນດັ່ງກ່າວ ຍັງມີເອກກະສານຂອງພໍ່ແມ່ເລນິນ, ຂອງບັນດາມິດສະຫາຍ ແລະ ບັນດາເພື່ອນຮ່ວມພາລະກິດປະຕິວັດ.

ພາຍໃນຫ້ອງອັນງຽບສະຫງົບນີ້ ຍາມໃດ ອາກາດກໍເຢືອກເຢັນຢູ່ສະເຫມີ. ຕາມຄວາມຈິງແລ້ວ ເອກກະສານກໍບໍ່ມັກຄວາມຮ້ອນ, ຄວາມຊຸ່ມຈື້ນ ແລະ ແສງບົນແຊວ; ແລະໃນບັນດາເອກກະສານເຫລົ່ານັ້ນ ລວມມີເອກກະສານທີ່ໄດ້ເວົ້າເຖິງຊີວິດໄວເດັກ ແລະ ໄວຫນຸ່ມຂອງ ວະລາດີເມຍ ອີລິດ.

ກ່ອນຈະເຖິງບ່ອນເກັບມັ້ງນສຳເນົາ, ເອກກະສານເຫລົ່ານີ້ ໄດ້ເດີນທາງມາເປັນເວລາດົນເຕີບ. ເອກກະສານດັ່ງກ່າວຖືກນຳມາແຕ່ ຊີມບຽກ, ປັດຈຸບັນຊື່ວ່າ ອູລີອານົບ, ໂດຍຜ່ານກາຊັງ, ຊາມາຣາ, ກີເອບ, ມົດສະກູ, ຊາຣາຕອບ, ໂວລົກດາ, ເປແຕກຊະບວກ, ແລະໃນທີ່ສຸດ ກໍໄດ້ມາສະຖິດຢູ່ທີ່ ມົດສະກູ ຈົນເທົ່າທຸກວັນນີ້.

ເອກກະສານເຫລົ່ານີ້ຖືກເກັບຮັກສາໄວ້ ແນວໃດ, ແມ່ນຍ້ອນຜີມືອັນພາກພຽນຂອງໃຜ ທີ່ໄດ້ເອົາໃຈໃສ່ຮັກສາມັນໄວ້? ກ່ອນອື່ນຫມົດ ພວກເຮົາຂໍສະແດງຄວາມຮູ້ບຸນຄຸນຕໍ່ແມ່ຂອງ ວະລາດີເມຍ ອີລິດ ມາຣີອາ ອາເລັກຊັງໂດຣວະນາ, ແລະພວກເອື້ອຍຂອງເພິ່ນຄື ອານນາ ແລະ ມາຣີອາ ອູລີອາໂນວາ. ພວກລູກຂອງ ມາຣີອາ ອາເລັກຊັງໂດຣວະນາທຸກຄົນ ໄດ້ກາຍເປັນນັກປະຕິວັດ. ພວກເຂົາເຈົ້າ ໄດ້ຖືກຈັບກຸມຄຸມຂັງ ຢ່າງຕໍ່ເນື່ອງກັນ. ມາຣີອາ ອາເລັກຊັງໂດຣວະນາ ຈຳເປັນໄດ້ພາລູກເຕົ້າຍ້າຍຈາກບ່ອນນັ້ນ ໄປຢູ່ບ່ອນນີ້, ຈາກກະຫນົບນັ້ນ ໄປກະຫນົບນີ້ ພາຍໃນຂອບເຂດຕົວເມືອງດຽວກັນ. ຍ້ອນເຫດດັ່ງກ່າວນີ້ເອງ ນາງຈຶ່ງໄດ້ເດີນທາງຈາກ ມົດສະກູ ໄປທີ່ ເປແຕກຊະບວກ ເພື່ອວິ້ງເຕັ້ນ ກ່ຽວກັບເລື່ອງທີ່ ວະລາດີເມຍ ອີລິດ ຊຶ່ງຖືກເນລະເທດໄປຢູ່ ຊິເບຣີ.

– ເຈົ້າຄວນທະນຶງໃຈນຳພວກລູກຂອງເຈົ້າໄດ້ແລ້ວ! ຜູ້ຫນຶ່ງຖືກແຂວນຄໍ, ແລ້ວອີກຜູ້

ໜຶ່ງ ຊໍ້າພັດຈະຖືກຕັດຄໍ! - ຫົວໜ້າກົມຕຳຫລວດກ່າວ ດ້ວຍຄວາມໜຳໃຈ.

ມາຣີອາ ອາເລັກຊັງໂດຣວະນາ ລຸກຂຶ້ນຈາກເກົ້າອີ້ທັນທີ, ແລ້ວກ່າວໂຕ້ຕອບພະນັກງານຂອງພະເຈົ້າຊາຄົນນັ້ນ ຢ່າງບໍ່ມີການຈົ່ງຈຽມແຕ່ຢ່າງໃດ:

- ແມ່ນແລ້ວ. ຂ້ອຍທະນົງໃຈນຳພວກລູກຂອງຂ້ອຍ!

ຈາກນັ້ນ ເພິ່ນ ກໍໄດ້ເດີນທາງໄປ ກີເອບ ຊຶ່ງເປັນບ່ອນທີ່ພວກລູກສາວ ອານນາ ອີລີນິດຈະນາ, ມາຣີອາ ອີລີນິດຈະນາ, ລູກຊາຍ ດີມີຕຣີອີລິດ ແລະລູກໃພ້ ອານໂຕນີນາ ອີວານົບນາ ຖືກຈັບກຸມ. ມາຣີອາ ອາເລັກຊັງໂດຣວະນາ ໄດ້ອົ້ງເຕັ້ນເພື່ອໃຫ້ພວກເຂົາເຈົ້າຖືກປ່ອຍເປັນ ອິດສະຫລະ.

ຈາກນັ້ນບໍ່ດົນ, ເພິ່ນກໍໄດ້ເດີນທາງໄປ ຊາຣາຕອບ ຊຶ່ງເປັນບ່ອນທີ່ພວກລູກສາວຂອງເພິ່ນຖືກຈັບກຸມອີກເທື່ອໃໝ່. ຕໍ່ມາ ເພິ່ນກໍໄດ້ເດີນທາງໄປ ໂວລັກດາ ເພື່ອອຸທອນໂທດເນລະເທດ ໃຫ້ແກ່ລູກສາວຫລ້າຂອງເພິ່ນ. ຕະຫລອດຊີວິດຂອງເພິ່ນໄດ້ເປັນມາດັ່ງນີ້ແຫລະ. ຈົ່ງເບິ່ງໜັງສືເດີນທາງຂອງ ມາຣີອາ ອາເລັກຊັງໂດຣວະນາແມ້, ທຸກໆໜ້າເຕັມໄປດ້ວຍຕາປະທັບ ແລະລາຍເຊັນ, ມີການຈົດທະບຽນທີ່ຢູ່ ຫລາຍກວ່າ 30 ຄັ້ງ! ມີຫລາຍເທື່ອທີ່ ມາຣີອາ ອາເລັກຊັງໂດຣວະນາ ໄດ້ຍົກຍ້າຍໄປຢູ່ບ່ອນໃໝ່ ໃນໄລຍະເວລາປັດຈຸບັນທັນດ່ວນທີ່ສຸດ.

ເຖິງແມ່ນວ່າ ຈະໄປຢູ່ແຫ່ງຫົນໃດ, ເພິ່ນກໍໄດ້ນຳເອົາສິ່ງທີ່ມີຄຸນຄ່າທີ່ສຸດສຳລັບເພິ່ນໄປນຳສະເໝີ ເປັນຕົ້ນ: ປຶ້ມຮຽນ, ຮູບແຕ້ມ, ແລະ ຈົດໝາຍຂອງພວກລູກເພິ່ນ... ເພິ່ນໄດ້ເກັບຮັກສາຊັບສົມບັດດັ່ງກ່າວໄວ້ໃນຫີບໄມ້ສີເຫລືອງດ້ວຍຄວາມກະຫນຸກະຫນອມເໝືອນດັ່ງດວງຕາ. ມີຫລາຍຄັ້ງເມື່ອຕົກຢູ່ໃນສະພາບຫຍຸ້ງຍາກ, ມາຣີອາ ອາເລັກຊັງໂດຣວະນາ ໄດ້ເປີດປຶ້ມຂຽນທຳມະດາຂອງພວກລູກ, ທັງທວນຄືນເຖິງອະດີດຫລາຍປີທີ່ຜ່ານມາ ເມື່ອຕອນຍັງຢູ່ຊິມບຽກ.

ດັ່ງນັ້ນ ພວກເຮົາມາພາກັນກັບໄປຫາອະດີດອັນຍາວນານຂອງຄອບຄົວ ອູລີອານົບ. ພວກເຮົາມາພາກັນເຂົ້າໄປໃນຫ້ອງເກັບມ້ຽນເອກກະສານ, ຈັບເອົາລູກກຸນແຈ ແລ້ວໄຂຫີບນິລະໄພໜ່ວຍໃດໜ່ວຍໜຶ່ງ. ຢູ່ຕໍ່ໜ້າພວກເຮົາແມ່ນເອກກະສານສີເຫລືອງ, ພວກເຮົາມາພາກັນເປີດເບິ່ງເອກກະສານໃດໜຶ່ງໃນຈຳນວນນັ້ນ ຊຶ່ງແມ່ນບັນດາຈົດໝາຍຂອງ ອີລີອາ ນີໂກລາເອວິດ ພໍ່ຂອງເລນິນ, ແລະຈາກຈົດໝາຍເຫລົ່ານີ້ພວກເຮົາສາມາດ

ຮັບຮູ້ການເດີນທາງກັບບ້ານ ຍາມລະດູບານໃຫມ່ຕາມເສັ້ນທາງກັນດານ. ອີລີອາ ນີໂກລາ-ເອວິດ ພວມນັ່ງຂຽນຫນັງສືຢູ່ທີ່ຫ້ອງເຮັດວຽກຂອງເພິ່ນ. ຢູ່ຝາເບື້ອງຫລັງໂຕະ ມີກິງໃສ່ຫນັງສືພິມ ຊຶ່ງແສ່ວໂດຍພວກລູກສາວ ຂອງເພິ່ນ. ພວກເຂົາເຈົ້າໄດ້ມອບໃຫ້ຜູ້ເປັນພໍ່ໃນໂອກາດມື້ຄົບຮອບວັນເກີດຂອງເພິ່ນ. ອີລີອາ ນີໂກລາເອວິດ ກັບມາແຕ່ສວນຊຶ່ງເວລານັ້ນຫນ້າວຽກໃນຍາມລະດູບານໃຫມ່ໄດ້ດຳເນີນໄປຢ່າງປົກກະຕິ. ສາຊາ ແລະ ໂວໂລດີອາ ພາກັນເສຍຫຍ້າ ໃຫ້ກົກໄມ້ແລະສວນຜັກ. ອານີອາ, ໂອລີອາ ແລະ ພວກຍັງເປັນເດັກນ້ອຍຢູ່ຄືມານີອາຊາ ແລະ ດີມາ ກໍໄດ້ຊ່ວຍ ມາຣີອາ ອາເລັກຊັງໂດຣວະນາ ຜູ້ເປັນແມ່ ປູກດອກໄມ້.

ອີລີອາ ນີໂກລາເອວິດ ໄດ້ຍິ້ມຫົວແລະຂໍ້ຄວາມທີ່ເພິ່ນໄດ້ກັ່ນກອງອອກມາຈາກປາຍປາກກາຂອງເພິ່ນມີດັ່ງນີ້: "ໃນທີ່ສຸດ ລະດູບານໃຫມ່ກໍມາເຖິງ, ພວກເຮົາຫາກໍເລີ່ມເສຍຫຍ້າໃນສວນ, ປູກຕົ້ນເຊີລີ ແລະ ຍ້າຍເບ້ຍໄມ້ບາງຢ່າງເທົ່ານັ້ນ."

ມື້ໃດອາກາດຮ້ອນ ພວກເພິ່ນມັກຫລິ້ນເກມງຽບໆ ຢູ່ໃນສວນຫລືກາງເດີ່ນ. ຜູ້ໃດຊິຮູ້ຈັກຊື່ຕົວເມືອງທີ່ຂຶ້ນຕົ້ນດ້ວຍຕົວອັກສອນທີ່ກຳນົດໄດ້ຫລາຍກວ່າຫມູ່? ຜູ້ໃດຊິຮູ້ຈັກປະດິດຄຳເວົ້າ ຢ່າງບໍ່ໃຫ້ຜິດພາດ ເຊັ່ນວ່າ: "ກາກິນກ້ວຍ ກົກກວຍກ້ານກ່ອງ ແກະກາບກ້ວຍກອງກົ້ນກ່ອງກິນ"?

ເຈົ້າຄົງມັກການຫລິ້ນແບບນີ້ ເຊັ່ນດຽວກັນ, ແຕ່ເຈົ້າບໍ່ຮູ້ດອກວ່າ ໂວໂລດີອາ ອູລີ-ອານົບ ກໍໄດ້ຫລິ້ນເຫມືອນກັນ ເມື່ອຄາວເພິ່ນຍັງເປັນເດັກນ້ອຍ.

ພວກເຮົາໄດ້ຮູ້ຈາກຄວາມຊົງຈຳຂອງ ມາຣີອາ ອາເລັກຊັງໂດຣວະນາວ່າ ໂວໂລດີອາ ມັກສັງເກດເຫັນຈຸດອ່ອນຂອງແຕ່ລະຄົນ, ແຕ່ເພິ່ນບໍ່ໄດ້ເອົາປຽບພວກຜູ້ນ້ອຍ ຫລືຜູ້ທີ່ອ່ອນແອ ຈັກເທື່ອ. ເພິ່ນຮັກ ມານີອາຊາ ນ້ອງສາວຫລ້າ ຫລາຍທີ່ສຸດ. ເພິ່ນມັກເອີ້ນນາງສະເຫມີວ່າ "ນົກນ້ອຍ" ແລະ ເພື່ອເປັນການຍອກຫລິ້ນ ເພິ່ນໄດ້ໂຍນນາງຂຶ້ນ ແລ້ວເດ່ແຂນຮັບເອົາ. ເພິ່ນໄດ້ເອົາເປືອກຕົ້ນແປກ ຫລືວ່າໄມ້ ມາເຮັດກຳປັ່ນນ້ອຍງາມໆແລ້ວເອົາມອບໃຫ້ ມິຕິອາ ນ້ອງຊາຍຫລ້າ ຂອງເພິ່ນ. ໂວໂລດີອາ ໄດ້ເອົາໄມ້ສີ່ຫລ່ຽມຄາງຫມູ ໄປໄວ້ໃນຫ້ອງມ້ຽນເຄື່ອງ ອັນເກົ່າແກ່. ເພິ່ນຊຳນານ ໃນການອອກກຳລັງກາຍ ຢູ່ທີ່ນັ້ນ ແລະໄດ້ສອນໃຫ້ແກ່ ມິຕິອາ.

ນີ້ ແມ່ນຮູບເຮືອນທີ່ມີເດີ່ນຫຍ້າ ຊຶ່ງ ໂວໂລດີອາ ອູລີອານົບ ໄດ້ອາໄສຢູ່. ເພິ່ນໄດ້ຂຶ້ນຂັ້ນໄດ ຊຶ່ງເຈົ້າເຫັນຢູ່ເບື້ອງຊ້າຍມືນັ້ນ, ເພື່ອປີນເຂົ້າໄປເທິງເພດານ ກັບ ໂອລີອາ ຜູ້



ແມ່ນເຮືອນຫລັງນີ້ເອງ ທີ່ຄອບຄົວອຸລີອານົບ ໄດ້ອາໄສຢູ່ຕັ້ງແຕ່ປີ 1878 ເຖິງປີ 1887

ເປັນເອື້ອຍ. ຢູ່ທີ່ນັ້ນ ມີແສງສະຫວ່າງແຕ່ພໍມິວໆ. ໄມ້ຂື່ທ່ອນໃຫຍ່ ທີ່ຄ້ຳຫລັງຄາຢູ່ນັ້ນ ຕ່ຳຈົນເຖິງຂັ້ນວ່າ ແມ້ນແຕ່ເດັກນ້ອຍກໍຕ້ອງໄດ້ກົ້ມ ເພື່ອລອດຜ່ານໄປ. ເມື່ອເວລາອັດປະຕູເຂົ້າ ມີພຽງແຕ່ແສງຕາເວັນ ທີ່ສ່ອງເຂົ້າມາຕາມປ່ອງ, ມັນພາໃຫ້ຮູ້ສຶກຄ້າຍກັບວ່າບໍ່ແມ່ນເມືອງຊິມບຽກ ແຕ່ວ່າ ແມ່ນເຮືອນຂອງ ຊາວອິນເດຍແດງ ທີ່ທະວີບ ອະເມລິກາ ອັນໄກແສນໄກພຸ້ນ ຫລາຍກ່ວາ.

ບາດນີ້ ພວກເຮົາມາພາກັນເປີດເບິ່ງເອກກະສານທີ່ບັນຈຸຄວາມຊົງຈຳຂອງ ມາຣີອາ ອີລີນິດຈະນາ, ເອື້ອຍຜູ້ທີ່ຫນຸ່ມກວ່າຫມູ່ ຂອງ ວະລາດີເມຍ ອີລິດ. ຈາກເອກກະສານນັ້ນ ພວກເຮົາຈະຮູ້ວ່າ ໂວໂລດີອາ ແລະ ໂອລີອາ ນ້ອງສາວຫລ້າ ຂອງເພິ່ນໄດ້ປະດິດເກມຫລິ້ນຕ່າງໆ ຂຶ້ນ ຢ່າງເນື່ອງນິດ, ໄດ້ແລ່ນຫລິ້ນຢູ່ໃນສວນ ແລະ ຕາມເດີ່ນບ້ານ, ໄດ້ປີນໄຕ່ຂຶ້ນເທິງຕົ້ນໄມ້, ໄດ້ເຂົ້າໄປໃນຫ້ອງມ້ຽນເຄື່ອງ ແລະ ເທິງເພດານ. ມື້ຫນຶ່ງ ໃນຂະນະທີ່ທຸກຄົນໄດ້ມາໂຮມກັນ ເພື່ອກິນເຂົ້າງາຍ, ພໍ່ຂອງພວກເພິ່ນ ໄດ້ອອກປາກການ

ວ່າ: "ໂອໂລດີອາ ກັບ ໂອລີອາ ໄປໃສ?" ແມ່ຂອງພວກເພິ່ນຊີ້ໄປເທິງເພດານ ແລ້ວ ບອກວ່າ: "ພວກເຂົາຢູ່ເທິງພຸ່ມ, ກຳລັງຫລິ້ນ ເປັນອິນເດຍແດງ." ຢູ່ໃນສວນ, "ພວກອິນເດຍແດງ" ໄດ້ປຸກຕູບຫລັງຫນຶ່ງຂຶ້ນ ແລະ ໄດ້ສົ່ງ ນິຕິອາ ນ້ອງຊາຍຫລ້າ ມາເອົາເຂົ້າ-ຈີ່ດຳຢູ່ເຮືອນຄົວ, ໂດຍບອກວ່າ ພວກຕົນຫິວເຂົ້າ!

ດີມິຕຣີ ອີລິດ ເອງກໍຍັງຈົດຈຳເກມຫລິ້ນທີ່ຜ່ານມາແຕ່ດົນນານແລ້ວໄດ້ດີເຫມືອນກັນ: "ເຮົາຈື່ໄດ້ວ່າ ມື້ຫນຶ່ງເຮົາໄດ້ເຂົ້າໄປໃນແຈສວນ ຊຶ່ງຮົກເຮື້ອໄປດ້ວຍຫຍ້າແລະ ພຸ່ມໄມ້, ຢູ່ທີ່ນັ້ນ ເຮົາໄດ້ເຫັນ ໂອລີອາ ຢູ່ໃນຕູບທີ່ເຮັດດ້ວຍກິ່ງໄມ້, ພື້ນປູດ້ວຍຫຍ້າ. ຢູ່ໃກ້ໆຕູບ ມີງ່າໄມ້ກອງຫນຶ່ງ ລີເປັນກິ່ງນ້ອຍໆ ປົນຢູ່ກັບໃບສີເຫລືອງ. ສິ່ງນັ້ນ ຫມາຍເຖິງກອງໄຟ ຊຶ່ງເປັນບ່ອນຫຸງເຂົ້າປາອາຫານ, ດ້ວຍຫມໍ້ເຫລັກຫລືຫມໍ້ດິນ. ໂອລີອາ ໄດ້ເອົາໃບໄມ້ໃຫຍ່ເຫນັບໃສ່ຫົວ, ເຮັດແບບຊົງຜົມຂອງພວກ ອິນເດຍແດງ. ໂອໂລດີອາ ໄດ້ອອກໄປໂຫ່ເນື້ອ, ສ່ວນນ້ອງສາວ ໄດ້ເຝົ້າເຮືອນ ແລະປຸງແຕ່ງອາຫານການກິນໄວ້ກ້າ. ໂອລີອາ ໄດ້ເວົ້າໃຫ້ເຮົາຮູ້ວ່າ ສິ່ງທັງຫມົດເຫລົ່ານີ້ໃຫ້ຖືເປັນຄວາມລັບ ແລະ ບໍ່ຄວນເປີດເຜີຍໃຫ້ຜູ້ໃຫຍ່ຮູ້. ຄາວຫນຶ່ງ, ໂອໂລດີອາ ກັບມາຈາກການໄປໂຫ່ເນື້ອ, ພາຍທະນູ ແລະ ລູກສອນ ພ້ອມທັງລາກຮາກໄມ້ເປັນຍອຍຍັບຍ່າງຊຶ່ງຖືວ່າ ແມ່ນສັດຕາຍ. ໂອໂລດີອາ ໄດ້ເລົ່າຢ່າງລະອຽດວ່າ ເພິ່ນໄດ້ຕໍ່ສູ້ຢ່າງດຸເດືອດກັບສັດໂຕນີ້ຄືແນວໃດ, ແລະ ສັດໂຕນີ້ໄດ້ຂົບ ແລະ ຫຍຸມເພິ່ນຄືແນວໃດ, ກ່ອນທີ່ມັນຈະຖືກລູກສອນ ອັນແມ່ນຍຳຂອງເພິ່ນຍິງຕາຍ. ແລ້ວ ໂອໂລດີອາ ກໍສົ່ງສຽງຮ້ອງຄາງ, ສຽງຮ້ອງໂອດໂອຍແບບໂຕສັດທີ່ເພິ່ນໄດ້ຂ້າ, ເພື່ອສະແດງໃຫ້ເຫັນວ່າມັນເປັນສັດທີ່ຫນ້າຢ້ານ ແລະໄດ້ປະສົບກັບຄວາມຫຍຸ້ງຍາກສໍ່າໃດກ່ອນຈະບັນລຸເປົ້າຫມາຍ. ພວກເຮົາໄດ້ຮັບຮູ້ເຫມືອນກັນວ່າ "ພວກຄົນຜິວຂາວ" ກໍມັກບັງບຽດສັດໂຕນີ້ ໂດຍພະຍາຍາມຄ້ອງເອົາມັນດ້ວຍບ້ວງ ເພື່ອຈັບເປັນຫລືຈັບຕາຍ... ພາຍຫລັງຈາກການສ່ຽງໄພດັ່ງກ່າວ ໂອໂລດີອາ ເວົ້າຄືກັບວ່າຕົນເອງອິດເມື່ອຍແລະຫິວໂຫຍເຕັມທີ. ແລະໃນທັນທີທັນໃດນັ້ນ ຈຳເປັນຕ້ອງໄດ້ໄປຊອກຫາເຂົ້າຈີ່ດຳແລະເກືອມາກິນ. ຍ້ອນແນວນັ້ນເອງເຮົາຈຶ່ງຖືກສົ່ງໄປທີ່ເຮືອນຄົວ ແຕ່ຕ້ອງປະຕິບັດຕາມຄຳແນະນຳ ຢ່າງເຂັ້ມງວດ ຄືບໍ່ໃຫ້ເວົ້າຫຍັງຕໍ່ "ພວກຄົນຜິວຂາວ" ແລະບໍ່ໃຫ້ພວກເຂົາເຫັນເຮົາ.

ເຮົາຍັງຈື່ໄດ້ວ່າ ເຮົາມີຄວາມທະນົງໃຈສໍ່າໃດ ເມື່ອໄດ້ເຮັດສຳເລັດວຽກງານດັ່ງກ່າວຢ່າງປິດລັບ...


24/VII

ຫລັງຈາກ ໄດ້ເອົາເກືອທາໃສ່ເຂົ້າຈີ່ດຳສອງບ່ຽງຮຽບຮ້ອຍແລ້ວ, ເຮົາໄດ້ຫລິບຄືນມາທີ່ດູບ ພ້ອມດ້ວຍຂອງທີ່ລັກໄດ້, ທັງລຶບລ້າງຮ່ອງຮອຍຕ່າງໆ, ເພື່ອໃຫ້ແນ່ໃຈວ່າ ບໍ່ມີຜູ້ໃດແນມເຫັນ. ຕໍ່ມາ, ພາຍຫລັງຈາກກິນເຂົ້າແລ້ວ, ໂອໂລດີອາ ໄດ້ເອົາລູກສອນ ທີ່ເຮັດແລ້ວໃຫມ່ໆ ອອກມາໃຫ້ພວກເຮົາເບິ່ງ ພ້ອມທັງຍິງຂຶ້ນເທິງຟ້າສູງໆ, ແລ້ວເຮົາກໍໄດ້ໄປນຳເກັບເອົາລູກສອນວິເສດລູກນັ້ນ ຊຶ່ງລື່ນຫນຶ່ງເອົ້ດ້ວຍປີກນົກ ແລະອີກລື່ນຫນຶ່ງຫຸ້ມດ້ວຍຕັງ.

ບາງເທື່ອ, ໂດຍສະເພາະເວລາຝົນຕົກ, ເກມຫລິ້ນແບບພວກອິນເດຍແດງ ໄດ້ມີຂຶ້ນຢູ່ທີ່ກອງເຟືອງ, ບ່ອນມ້ຽນກວຽນ ຫລືຢູ່ເທິງເພດານ.

ແລະນີ້ ແມ່ນຮູບຖ່າຍຂອງ ໂອໂລດີອາ ພ້ອມດ້ວຍ ໂອລີອາ ອີກແຜ່ນຫນຶ່ງ ທີ່ພວກເຮົາໄດ້ເຫັນຢູ່ໃນຫນ້າຕໍ່ມາ. ໂອໂລດີອາ ໄດ້ສີ່ປີແລະ ໂອລີອາ ໄດ້ສອງປີປາຍ. ເຖິງແມ່ນວ່າພວກເພິ່ນຈະຍັງນ້ອຍ, ແຕ່ກໍມີຫົວຄິດປະດິດສ້າງ ...

ສິ່ງທີ່ ໂອໂລດີອາ ແລະ ໂອລີອາ ໄດ້ປະດິດຄິດຂຶ້ນນັ້ນ, ພວກເຮົາຈະພົບເຫັນຢູ່ໃນຄວາມຊົງຈຳຂອງ ອານນາ ອີລີນິດຈະນາ ເອື້ອຍກົກຂອງພວກເພິ່ນ. "ບາງເທື່ອ, ເມື່ອເວລາທີ່ ແມ່ຂອງພວກເຮົາບໍ່ຢູ່, ພວກທີ່ໃຫຍ່ຕ້ອງໄດ້ເບິ່ງແຍງນ້ອງນ້ອຍ, ແຕ່ວ່າເວົ້າໂດຍທົ່ວໄປແລ້ວ ພວກເຮົາຍັງບໍ່ສາມາດເຮັດຫລ້ອນຫນ້າທີ່ໄດ້. ເຮົາຍັງຈື່ໄດ້ດີວ່າມື້ຫນຶ່ງພວກນ້ອງນ້ອຍໄດ້ລອດພົ້ນໄປ ຈາກສາຍຕາພວກເຮົາ (ທັງສອງຄົນມີອາຍຸຕ່ຳກວ່າຫ້າປີ) ພວກເຂົາໄດ້ພາກັນຫລິ້ນຂີ້ດີ້ ຢ່າງສຸດຂີດ, ແລະຍັງໄດ້ພາກັນຄວ່າງເກີບຢາງ ແຕ່ປະຕູທາງເຂົ້າ ໄປໃສ່ຫ້ອງນັ່ງຫລິ້ນ. ພວກເຮົາທັງສອງ ຜູ້ມີນິໄສມັກສະຫງົບ, ຮູ້ສຶກຕື່ນເຕັ້ນທີ່ສຸດຕໍ່ການຄິດຄົ້ນດັ່ງກ່າວ. ແລະຕໍ່ມາ ມີອີກຫລາຍເທື່ອ ຊຶ່ງພວກເຮົາໄດ້ຢູ່ຮ່ວມກັນ ຫມົດທັງສີ່ ... ເມື່ອພວກເດັກນ້ອຍພາກັນລອດພົ້ນໄປຈາກສາຍຕາ ອີກເທື່ອໃຫມ່, ພວກເຮົາໄດ້ປຶກສາກັນ ປານເປີດກອງປະຊຸມໃນຍາມສົງຄາມ ແລະພວກເຮົາໄດ້ຖາມກັນຄ່ອຍໆ ວ່າຄວນຈະເຮັດແນວໃດ.

-ພວກເຂົາຈະຕ້ອງ ພາກັນ ຄວ່າງເກີບຢາງອີກເປັນແນ່, -ຫນຶ່ງ ໃນຈຳນວນພວກເຮົາເວົ້າຂຶ້ນ ດ້ວຍຄວາມ ວິຕົກ.

ພໍຄຳເວົ້າດັ່ງກ່າວ ຜ່ານເຂົ້າຫູຂອງພວກເດັກນ້ອຍ ແລະ ທັນໃດນັ້ນ, ປັບ! ເກີບຢາງກໍ

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ